# ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາແມ່ຍິງທີ່ດ້ອຍໂອກາດໃນນະຄອນຫຼວງ ໂດຍອີງໃສ່ແມ່ຍິງທີ່ເຮັດວຽກຢູ່ໃນໂຮງງານເປັນຫຼັກ



| ID: | Author: | Organization: | Created date: |
|---|---|---|---|
| 67 | TKL | Takieng Lao | 2020-01-28 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ໃນປັດຈຸບັນ ບັນດາແມ່ຍິງທີ່ຢູ່ໃນນະຄອນຄອນຫຼວງ ເວົ້າລວມ ເວົ້າສະເພາະກໍແມ່ນແມ່ຍິງທີ່ມາຈາກຕ່າງແຂວງ ໂດຍສ່ວນໃຫຍ່ກໍແມ່ນຂຶ້ນມາຊອກຫາວຽກເຮັດງານທຳ ດ້ວຍຄວາມຂາດເຂີນທາງດ້ານການເງິນ ແລະ ລາຍໄດ້ ຈຶ່ງເປັນເຫດໃຫ້ພວກເຂົາຕ້ອງຫ່າງຈາກບ້ານເກີດບ້ານນອນ ຫ່າງຈາກຄອບຄົວ ເພື່ອຂຶ້ນມາເຮັດວຽກຢູ່ໃນນະຄອນຫຼວງວຽງຈັນ ໂດຍທີ່ພວກເຂົາບໍ່ຮູ້ເລີຍວ່າ ໃນເມືອງໃຫຍ່ທີ່ເຕັມໄປດ້ວຍຄວາມຈະເລີນແຫ່ງນີ້ ກໍເຊື່ອງຊ້ອນອັນຕະລາຍຕ່າງໆ ອັນເປັນໄພແກ່ພວກເຂົາເຈົ້າໄດ້ເຊັ່ນກັນ, ແມ່ຍິງທີ່ດ້ອຍໂອກາດໃນທີ່ນີ້ ຄືແມ່ຍິງທີ່ຍັງຂາດເຂີນທາງດ້ານການສຶກສາ, ຄວາມຮູ້ ແລະ ຄວາມເຂົ້າໃຈໃນການດູແລສຸຂະພາບຈະເລີນພັນຂອງພວກເຂົາເອງ ລວມໄປເຖິງສິດທິໃນການຕັດສິນໃຈ ແລະ ການສະແດງຄວາມຄິດເຫັນຕ່າງໆ. ເມື່ອເປັນເຊັ່ນນັ້ນແລ້ວ ທາງອົງການແຄນາບາຊາດປະຈຳລາວ ແລະ ສະມາຄົມເພື່ອສຸຂະພາບ ຈຶ່ງໄດ້ຈັດຕັ້ງ ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາແມ່ຍິງທີ່ດ້ອຍໂອກາດໃນນະຄອນຫຼວງ ຂຶ້ນມາເນື່ອງຈາກເຫັນເຖິງຄວາມສຳຄັນໃນການສະແດງອອກທາງດ້ານສິດທິຕ່າງໆຂອງແມ່ຍິງທີ່ດ້ອຍໂອກາດ ພ້ອມທັງເພື່ອເຝິກອົບຮົມ ແລະ ໃຫ້ຄວາມຮູ້ຄວາມເຂົ້າໃຈແກ່ພວກເຂົາເຈົ້າໃນການເບິ່ງແຍງດູແລສຸຂະພາບຂອງຕົນເອງ.

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

- ທາງໂຄງການໄດ້ມີການສຳຫຼວດກຸ່ມເປົ້າໝາຍທີ່ເປັນແມ່ຍິງທີ່ເຂົ້າມາເຮັດວຽກຢູ່ໃນໂຮງງານຕ່າງໆທີ່ຢູ່ໃນນະຄອນຫຼວງ ໂດຍອີງຕາມການສຳຫຼວດ ແລະ ລາຍງານຂອງສະຫະພັນກຳມະບານແຫ່ງຊາດລາວ ແລະ ທາງສະຫະພັນກຳມະບານກໍເປັນຜູ້ເລືອກໂຮງງານຕ່າງໆໃຫ້ແກ່ທີມງານໂຄງການເພື່ອລົງຈັດຕັ້ງປະຕິບັດກິດຈະກຳ

- ທາງໂຄງການໄດ້ມີການເຝິກອົບຮົມບົດຮຽນຕ່າງໆໃຫ້ແກ່ບັນດາໂຮງງານທີ່ໄດ້ເຂົ້າຮ່ວມໂຄງການ
- ໃນການເຝິກອົບຮົມນັ້ນ ມີ 6 ຫົວຂໍ້ຫຼັກ ດັ່ງນີ້: (1) ໂພສະນາການ, (2) ການໃສ່ຖົງຢາງອານາໄມ, (3) ການເປັນປະຈຳເດືອນ ແລະ ລົງຂາວ, (4) ການຄຸມກຳເນີດ, (5) ສິດທິທາງເພດ ແລະ ການຈະເລີນພັນຂອງຂ້ອຍ, (6) ພະຍາດຕິດຕໍ່ທາງເພດສຳພັນ (ພຕພ) ແລະ ເອດ/HIV
- ໂຄງການໄດ້ມີການສ້າງກຳລະນີສຶກສາຂຶ້ນມາ ໂດຍອີງຕາມການພົບບັນຫາຂອງຜູ້ເຂົ້າຮ່ວມ
- ໂຄງການໄດ້ມີການສົ່ງຕໍ່ຄົນເຈັບ ຫຼື ມີຄວາມສ່ຽງທີ່ຈະເປັນພະຍາດຕ່າງໆ ໂດຍແນະນຳໃຫ້ໄປກວດສຸຂະພາບທີ່ຄຣີນິກໄວໜຸ່ມ
- ສ້າງອາສາສະໝັກປະຈຳແຕ່ລະໂຮງງານ ເພື່ອສະດວກໃນການຕິດຕໍ່ປະສານງານຕ່າງໆ

## 3. ຜົນສຳເລັດຂອງໂຄງການ / Results of the project

- ບັນດາຜູ້ເຂົ້າຮ່ວມໄດ້ຮັບຮູ້ແລະ ເຂົ້າໃນການເບິ່ງແຍງຮັກສາສຸຂະພາບຫຼາຍຂຶ້ນ
- ຜູ້ເຂົ້າຮ່ວມເອົາໃຈໃສ່ໃນອາຫານການກິນທີ່ຖືກຫຼັກອານາໄມຫຼາຍຂຶ້ນ
- ຜູ້ເຂົ້າຮ່ວມຮັບຮູ້ເຖິງອັນຕະລາຍທີ່ມາກັບພະຍາດຕິດຕໍ່ທາງເພດຕ່າງໆ ແລະ ຍັງໄດ້ຮັບຮູ້ວິທີປ້ອງກັນ ແລະ ແກ້ໄຂບັນຫາສະເພາະໜ້າໄດ້
- ຜູ້ເຂົ້າຮ່ວມສາມາດເຜີຍແຜ່ຂໍ້ມູນຂ່າວສານແກ່ຄົນອ້ອມຂ້າງໄດ້
- ໂຄງການສາມາດຂະຫຍາຍຜົນການຈັດຕັ້ງປະຕິບັດອອກສູ່ໂຮງງານອື່ນໆອີກໄດ້
- ຜູ້ເຂົ້າຮ່ວມໄດ້ສາມາດໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ

## 4. ປັດໄຈສູ່ຜົນສຳເລັດ / Factors of success

- ທາງໂຄງການໄດ້ຮັບຄຳແນະນຳ ແລະ ການສະໜັບສະໜູນທີ່ດີ ບໍ່ວ່າຈະເປັນທາງດ້ານທຶນຮອນ ຫຼື ຄວາມຮູ້ວິຊາການຕ່າງໆ ຈາກອົງການແຄນານາຊາດປະຈຳລາວ ແລະ ສະມາຄົມເພື່ອສຸຂະພາບ
- ທາງຜູ້ເຂົ້າຮ່ວມໃຫ້ຄວາມສົນໃຈ ແລະ ຕັ້ງໃຈເປັນຢ່າງດີໃນການເຂົ້າຮ່ວມການເຝິກອົບຮົມໃນຫົວຂໍ້ຕ່າງໆ
- ທາງພາກລັດໃຫ້ຄວາມອຳນວຍຄວາມສະດວກ ແລະ ເຫັນເຖິງຄວາມສຳຄັນຂອງບັນຫາຕ່າງໆທີ່ເກີດຂຶ້ນກັບບັນດາແມ່ຍິງ
- ທາງທີມງານໄດ້ມີການຈັດຕັ້ງອາສາສະໝັກປະຈຳໂຮງງານທີ່ສາມາດປະສານງານກັບໂຄງການໄດ້
- ທາງໂຄງການໄດ້ມີການຕິດຕາມ ແລະ ປະເມີນຜົນໃນການກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດໄປ

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

- ຜູ້ເຂົ້າຮ່ວມທັງໝົດເປັນສາວໂຮງງານ ແລະ ສາວໂຮງງານແມ່ນເຮັດວຽກໜັກຫຼາຍ ເຮົາຈຶ່ງຕ້ອງອາໄສໂມງເລີກວຽກຂອງເຂົາເຈົ້າໃນການເຝິກອົບຮົມ ຈຶ່ງເຮັດໃຫ້ບາງຄັ້ງສາວໂຮງງານເອງກໍມີຄວາມອິດເມື່ອຍ ແລະ ບໍ່ຢາກເຂົ້າຮ່ວມເຝິກບົດຮຽນ
- ບາງໂຮງງານມີໄລຍະທາງທີ່ຂ້ອນຂ້າງໄກ ແລະ ປ່ຽວ ເຊິ່ງສ້າງຄວາມສ່ຽງໃນການເດີນທາງກາງຄືນໃຫ້ແກ່ທີມງານໂຄງການ
- ຜູ້ເຂົ້າຮ່ວມບໍ່ມີລົດເປັນຂອງຕົນເອງ ເມື່ອເວລາຈັດປະຊຸມຢູ່ຫ້ອງການ ຈຶ່ງເປັນການຍາກສຳລັບພວກເຂົາໃນການເດີນທາງໄປມາ
- ນອກຈາກບໍ່ມີລົດແລ້ວ ສາວໂຮງງານບາງຄົນກໍບໍ່ຮູ້ເສັ້ນທາງໄປໃນນະຄອນຫຼວງ
- ສາວໂຮງງານບາງຄົນຍັງບໍ່ກ້າສະແດງອອກ ແລະ ບໍ່ກ້າບອກບັນຫາທີ່ຕົນເອງຢູ່ ເນື່ອງຈາກອາຍໝູ່ຄູ່

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

- ປະສານງານຢ່າງລະອຽດກັບໂຮງງານທີ່ເຮົາຢາກລົງປະຕິບັດກິດຈະກຳ
- ຄູເຝິກຄວນກຳຄວາມຮູ້ຢ່າງແໜ້ນແຟ້ນ ເນື່ອງຈາກສາວໂຮງງານບາງຄົນກໍເຊື່ອຄູເຝິກຫຼາຍກວ່າແພດໝໍເສຍອີກ
- ສ້າງຄວາມລຶ້ງເຄີຍແກ່ຜູ້ເຂົ້າຮ່ວມ ເພື່ອໃຫ້ເຂົາເຈົ້າຮູ້ສຶກເປັນກັນເອງກັບທີມງານຫຼາຍທີ່ສຸດ
- ຄວນມີການຕິດຕາມ ແລະ ປະເມີນຜົນ ເພື່ອຊອກຫາຈຸດບົກຜ່ອງ ແລະ ເພື່ອເປັນບົດຮຽນໃນການຈະຈັດກິດຈະກຳໃນຄັ້ງຕໍ່ໄປ








HUAWEI nova 3i
DUAL CAMERA